ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປລາວ
ສະຖາບັນການທະນາຄານ

ເລກທີ.70..../ສທຄ
ນະຄອນຫຼວງວຽງຈັນ,ວັນທີ.20.ກັນຍາ 2021

# ແຈ້ງການ
## ແນະນຳກ່ຽວກັບການສອບເສັງຮັບນັກສຶກສາໃໝ່

ເຖິງ: ຜູ້ທີ່ສະໝັກສອບເສັງເຂົ້າຮຽນຢູ່ສະຖາບັນການທະນາຄານ ສົກສຶກສາ 2020-2021.

**ເລື່ອງ: ການປະຕິບັດກ່ອນເຂົ້າສອບເສັງ ONLINE ຜ່ານ APP SCHOOLOGY.**

- ອີງຕາມແຜນແບ່ງປັນນັກຮຽນ-ພະນັກງານເຂົ້າຮຽນຕໍ່ປະຈຳສົກປີ 2020-2021 ສະບັບເລກທີ 816/ສສດ, ລົງວັນທີ 26 ສິງຫາ 2021.
- ອີງຕາມແຈ້ງການຈາກກົມການສຶກສາຊັ້ນສູງ ສະບັບເລກທີ 892/ຊສ, ລົງວັນທີ 27 ກັນຍາ 2021.
- ອີງຕາມແຜນປະຕິທິນການສຶກສາສົກສຶກສາ 2021-2022 ສະບັບເລກທີ 26/ສທຄ, ລົງວັນທີ 24 ສິງຫາ 2021.
- ອີງຕາມປະກາດຮັບນັກສຶກສາສະບັບເລກທີ 62/ສທຄ, ລົງວັນທີ 20 ສິງຫາ 2021, ສະບັບເລກທີ 63/ສທຄ, ລົງວັນທີ 25 ສິງຫາ 2021 ແລະ ແຈ້ງການຮັບສະໝັກ ແລະ ສອບເສັງຄັດເລືອກເຂົ້າຮຽນຢູ່ສະຖາບັນການທະນາຄານ ສະບັບເລກທີ 67/ສທຄ, ລົງວັນທີ 02 ກັນຍາ 2021.

ສະຖາບັນການທະນາຄານ ໄດ້ແຈ້ງການແນະນຳເຖິງນັກສອບເສັງເຂົ້າຮຽນຢູ່ສະຖາບັນການທະນາຄານ ສົກສຶກສາ 2020-2021 ຊາບທົ່ວເຖິງກັນວ່າ ກ່ອນຈະເຂົ້າສອບເສັງຕົວຈິງໃຫ້ນັກສອບເສັງອ່ານຄຳແນະນຳໃຫ້ລະອຽດ ແລະ ເຂົ້າໃຈເພື່ອປະຕິບັດແຈ້ງການແນະນຳການສອບເສັງ ONLINE ຜ່ານ APP SCHOOLOGY ເຊິ່ງສະຖາ

ບັນການທະນາຄານໄດ້ກຳນົດ ຂໍ້ຫ້າມ ແລະ ການປະຕິບັດໃນການສອບເສັງ Online ຜ່ານ APP SCHOOLOGY ລະອຽດດັ່ງນີ້:

I. **ຂໍ້ຄວນປະຕິບັດຂອງນັກສອບເສັງ ONLINE ຜ່ານ APP SCHOOLOGY ມີດັ່ງນີ້:**

1. ນັກສອບເສັງຕ້ອງກະກຽມໂທລະສັບສະມາດໂຟນ 02 ໜ່ວຍ ຫຼື ສະມາດໂຟນ 01 ໜ່ວຍ ແລະ ຄອມພິວເຕີໂນດບຸກ 01 ໜ່ວຍ.
2. ນັກສອບເສັງຕ້ອງໃຊ້ໂທລະສັບສະມາດໂຟນ 01 ໜ່ວຍ ເພື່ອເຂົ້າລິ້ງເປີດກ້ອງໃຫ້ຄະນະກຳມະການຕິດຕາມການສອບເສັງຂອງຕົນ.
3. ນັກສອບເສັງຕ້ອງກວດສອບສັນຍານອິນເຕີເນັດ ແລະ ແພັກເກັດໃນການນຳໃຊ້ອິນເຕີເນັດຂອງຕົນເອງໃຫ້ພ້ອມກ່ອນການເຂົ້າລະບົບສອບເສັງ ONLINE ຜ່ານ APP SCHOOLOGY.
4. ນັກສອບເສັງຕ້ອງປິດສັນຍານການໂທເຂົ້າ-ອອກ ໃນຊ່ວງກຳລັງສອບເສັງໃຫ້ນຳໃຊ້ສະເພາະເນັດ ຫຼື ຊິມເນັດເທົ່ານັ້ນ ແລະ ເພື່ອປ້ອງກັນບໍ່ໃຫ້ອອກຈາກລະບົບ SCHOOLOGY ແລະ ປ້ອງກັນການລົບກວນສະມາທິໃນການສອບເສັງ.
5. ນັກສອບເສັງຕ້ອງ Scan QR Code Link ດ້ານລຸ່ມນີ້ເພື່ອໃຫ້ຄະນະກຳມະການຕິດຕາມການສອບເສັງຂອງຕົນ.
6. ໃຫ້ນັກສຶກສາປະຕິບັດການສອບເສັງຕາມວັນເວລາ ທີ່ທາງສະຖາບັນການທະນາຄານກຳນົດຢ່າງເຂັ້ມງວດ ແລະ ສົ່ງບົດສອບເສັງໃຫ້ທັນເວລາທີ່ກຳນົດ, ຖ້າກໍລະນີສົ່ງບົດບໍ່ທັນຕາມກຳນົດເວລາ ລະບົບຈະດຶງຂໍ້ມູນການສອບເສັງທັງໝົດກັບຄືນເຂົ້າສູ່ຖານຂໍ້ມູນແບບອັດຕະໂນມັດ.

II. **ຂໍ້ຫ້າມສຳລັບນັກສອບເສັງ Online**

1. ຫ້າມນັກສອບເສັງໃຫ້ຄົນອື່ນເສັງແທນຕົນເອງ ຫຼື ຜິດຈັນຍາບັນການສອບເສັງ.
2. ຫ້າມນັກສອບເສັງໃຫ້ເຫດຜົນສົ່ງສອບເສັງບໍ່ທັນ, ສັນຍານເນັດບໍ່ດີ ແລະ ໂທລະສັບເພ.
3. ຫ້າມນັກສອບເສັງເຄັບໜ້າຈໍສົ່ງໃຫ້ຄົນອື່ນຕອບ ຫຼື ສົ່ງໃຫ້ໝູ່ກ່າຍ ຖ້າກໍລະນີດັ່ງກ່າວໃນລະບົບຈະຖືວ່ານັກສອບເສັງໄດ້ອອກຈາກລະບົບການສອບເສັງ ONLINE ແລ້ວ.
4. ຫ້າມນັກສອບເສັງຕອບຂໍ້ຄວາມ ຫຼືແຊັດ(Whatsapp, Line, Wechat, Messenger, Twitter, Instragram...) ໃນເວລາສອບເສັງ ONLINE ຜ່ານ APP SCHOOLOGY ລະບົບຈະຖືວ່ານັກສຶກສາໄດ້ອອກຈາກລະບົບການສອບເສັງ.

5. ຫ້າມນັກສອບເສັງເຂົ້າລະບົບສອບເສັງເກີນ 03 ຄັ້ງ,   ຖ້າເຂົ້າລະບົບເກີນນັ້ນລະບົບຈະຕັດສິດການສອບເສັງທັນທີແບບອັດຕະໂນມັດທັນທີ.
6. ຫ້າມນັກສອບເສັງເອົາເອກະສານຂຶ້ນມາອ່ານໃນເວລາເຂົ້າລະບົບສອບເສັງ ເພາະຄະນະກຳມະການມີລະບົບຕິດຕາມການສອບເສັງຂອງນັກສອບເສັງ.
7. ຫ້າມນັກສອບເສັງຢູ່ບ່ອນ ຫຼື ສະຖານທີ່ບໍ່ມີສັນຍານເນັດ ຫຼື ສັນຍານໜ້ອຍໃນເວລາສອບເສັງ ONLINE ຜ່ານ APP SCHOOLOGY.

ດັ່ງນັ້ນ, ສະຖາບັນການທະນາຄານຈຶ່ງແຈ້ງການມາຍັງນັກສອບເສັງເຂົ້າຮຽນຢູ່ສະຖາບັນການທະນາຄານທຸກຄົນຈົ່ງຮັບຊາບ ແລະປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຫົວໜ້າສະຖາບັນການທະນາຄານ

ປອ.ອາຄົມ ປຣະເສີດ

Passcode: 6KRuLn

App: Zoom

Scan QR Code Link VDO Conference

App: TrueVroom